ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 50 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 10 ພະຈິກ 2017

ສຳນັກງານ ຄຄຊ
ຮັບ ເລກທີ 12449
ວັນທີ 10 NOV 2017
ໂທລະສັບ 021 217770

# ບົດລາຍງານ

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດ ທີ 23-27/10/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,57% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກຍອດການສັ່ງຊື້ສິນຄ້າຄົງທົນ ເພີ່ມຂຶ້ນ 2,20% ຂອງເດືອນ 09/2017 ຈາກເພີ່ມຂຶ້ນ 2,00% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຕົວເລກລວມຍອດຜະລິດຕະພັນພາຍໃນ ເພີ່ມຂຶ້ນ 3,00% ຂອງໄຕມາດ 03/2017 ຈາກເພີ່ມຂຶ້ນ 3,10% ໃນໄຕມາດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 16-20/10/2017 | ອາທິດນີ້ 23-27/10/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1811 | 1,1629 | 1,57% |
| ເຢນ/ໂດລາ | 113,36 | 114,05 | -0,60% |
| ບາດ/ໂດລາ | 33,17 | 33,28 | -0,33% |
| ເປໂຊ/ໂດລາ | 51,50 | 51,76 | -0,50% |
| ຣູເປັຍ/ໂດລາ | 13.517 | 13.613 | -0,71% |
| ໂດລາສິງກະໂປ/ໂດລາ | 1,3596 | 1,3683 | -0,64% |
| ຢວນ/ໂດລາ | 6,6190 | 6,6470 | -0,42% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 4,47% ຈາກ 50,73 ໂດລາ/ບາເຣວ ມາເປັນ 53,00 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຂອງຜູ້ຊົມໃຊ້ນ້ຳມັນຂອງ ສະຫະລັດອາເມລິກາເພີ່ມຂຶ້ນເຊິ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນແຮັດຊັງຂອງສະຫະລັດອາເມລິກາ ຫຼຸດລົງ 5,47 ລ້ານບາເຣວ ຂອງອາທິດທີ 20/10/2017 ຈາກເພີ່ມຂຶ້ນ 0,91 ລ້ານບາເຣວ;

- ສຳລັບລາຄາຄຳ ຫຼຸດລົງ 1,03% ຈາກ 1.280,68 ໂດລາ/ອອນ ມາເປັນ 1.267,47 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາ ຊື້-ຂາຍ ຄຳເພື່ອເກງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0,06% ແລະ ແຂງຄ່າຂຶ້ນ 0,22% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 0,35% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,45% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 16-20/10/2017 | | | ອາທິດນີ້ 23-27/10/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.357,29 | 8.382,28 | 8.370,45 | 8.356,60 | 8.379,30 | 8.365,18 | 0,10% | 0,04% | 0,06% | -0,48% | -0,30% | -0,35% |
| ບາດ | 252,84 | 254,67 | 254,02 | 252,63 | 253,84 | 253,47 | 0,08% | 0,33% | 0,22% | -7,54% | -7,38% | -7,45% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,50% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 9,62%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,69% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,31%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (20-26/10/2017) ເຫັນວ່າ ທທກ ຂາຍໂດລາສຸດທິ 7,20 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 27,21 ລ້ານໂດລາ ແລະ ຂາຍໂດລາໄດ້ 34,41 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 126,65 ລ້ານບາດ (ໃນນີ້ ຊື້ບາດໄດ້ 316,92 ລ້ານບາດ ແລະ ຂາຍບາດໄດ້ 443,57 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 8,33% ແລະ ເງິນບາດເພີ່ມຂຶ້ນ 20,34%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 7,35 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 106 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 57,70 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 138,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າບໍ່ມີການຊື້-ຂາຍ.

[1] % ການປຽບແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລຍຖ່ວງນ້ຳໜັກ

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 13-19/10/2017 | | ອາທິດນີ້ 20-26/10/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **31,79** | **137,56** | **27,21** | **316,92** | **-14,41%** | **130,39%** |
| - ທ/ຄທຸລະກິດລັດ | 8,08 | 50,60 | 9,68 | 49,01 | 19,80% | -3,14% |
| - ທ/ຄທຸລະກິດອື່ນໆ | 23,71 | 86,96 | 17,53 | 267,91 | -26,06% | 208,08% |
| **2. ການຂາຍເງິນຕາຕ່າງປະເທດ** | **25,09** | **494,41** | **34,41** | **443,57** | **37,15%** | **-10,28%** |
| - ທ/ຄທຸລະກິດລັດ | 7,46 | 142,09 | 8,45 | 66,84 | 13,27% | -52,96% |
| - ທ/ຄທຸລະກິດອື່ນໆ | 17,63 | 352,32 | 25,96 | 376,73 | 47,25% | 6,93% |
| ຊື້-ຂາຍສຸດທິ ທທກ | **6,70** | **-356,85** | **-7,20** | **-126,65** | **-207,46%** | **-64,51%** |
| - ຜິດດ່ຽງ ຊື້-ຂາຍ | 21,08% | -259,41% | -26,46% | -39,96% | -225,53% | -84,59% |
| - ມູນຄ່າການຊື້-ຂາຍ | 56,88 | 631,97 | **61,62** | **760,49** | **8,33%** | **20,34%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-10,14** | **-87,70** | **-7,35** | **-106,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 10,14 | 87,70 | 7,35 | 106,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **2,00** | **63,13** | **57,70** | **138,00** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **-0,59** | **2.000,00** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,02 | 2.000,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,61 | 0,00 | 0,00 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 10/2017 ຄາດວ່າຈະຢູ່ໃນລະດັບ 0,19% (ຕົວເລກຄາດຄະເນ).

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ຫຼຸດລົງ 93% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 1,51 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 117,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 127,55 ລ້ານໂດລາສະຫະລັດທຽບເທົ່າ.

3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 803 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 204 ສະບັບ ເທົ່າກັບ 20,25% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 293,97 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 220,01 ຕື້ກີບ ເທົ່າກັບ 42,80% ເມື່ອທຽບໃສ່ອາທິດຜ່ານມາ:

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (20-26/10/2017) ມີທັງໝົດ 3.488 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.429 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດ ນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 584,36 ຕື້ກີບ ຈາກ 836,70 ຕື້ກີບ ມາເປັນ 1.448,06 ຕື້ກີບ ເທົ່າກັບ 67,65%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 59 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ ເພີ່ມຂຶ້ນ 373,27 ຕື້ກີບ ຈາກ 2,44 ຕື້ກີບ ມາເປັນ 375,71 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.043,08 ຈຸດ ຫຼຸດລົງ 1,14% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 331.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,55 ຕື້ກີບ ເພີ່ມຂຶ້ນ 6,41% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 478,54% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 16-20/10/2017 | ດັດຊະນີອາທິດທີ 23-27/10/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.031,31 | 1.043,08 | -1,14 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

(ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 21.100 | 113.700.000 | 5.389 | 78.500 | 420.735.000 | 5.360 | 273,81 | 271,82 | -28,65 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 102.600 | 523.510.000 | 5.102 | 209.900 | 1.059.770.000 | 5.049 | 104,58 | 102,44 | -53,51 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.400 | - | - | 7.000 | - | - | -400,00 |
| ບໍລິສັດປີໂຕລ້ຽມເທຣດ ດິ້ງລາວ ມະຫາຊົນ | - | - | 1.950 | 20.400 | 40.705.000 | 1.995 | - | - | 45,34 |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງ ມະຫາຊົນ | 50.100 | 70.150.000 | 1.400 | 23.100 | 34.735.000 | 1.504 | -53,89 | -50,48 | 103,48 |
| ທັງໝົດ | 173.800 | 707.360.000 | 4.070 | 331.900 | 1.555.945.000 | 4.688 | 91,08 | 120,13 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນ ຕຸລາ 2017 (ຫສນຍ); ❷ ກອງປະຊຸມເຜີຍແຜ່ຂໍ້ຕົກລົງ ວ່າດ້ວຍການດັດແກ້ມາດຕາ 21 ຂອງຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ; ❸ ກອງປະຊຸມເຜີຍແຜ່ວຽກງານຕະຫຼາດທຶນຈັດຂຶ້ນທີ່ (ແຂວງສະຫວັນນະເຂດ); ❹ ກອງປະຊຸມປຶກສາຫາລື ແລະ ຊອກຫາວິທີແກ້ໄຂຕາມຂໍ້ສະເໜີຂອງບໍລິສັດຈົດທະບຽນ

ໃນຕະຫຼາດຫຼັກຊັບລາວ;❺ ກອງປະຊຸມປະກອບຄໍາເຫັນກ່ຽວກັບ ຮ່າງຂໍ້ຕົກລົງ ວ່າດ້ວຍຄ່າຄຸ້ມຄອງປະຈໍາປີ ແລະ ຄ່າທໍານຽມການໃຫ້ບໍລິການ ສະຖາບັນການເງິນ.

- ສໍາເລັດການເດີນທາງໄປເຄື່ອນໄຫວວຽກທາງລັດຖະການຂອງຄະນະຜູ້ວ່າການ ທຫລ ທີ່ (ແຂວງຊຽງຂວາງ ແລະ ແຂວງຫົວພັນ);

- ສໍາເລັດຕ້ອນຮັບການເຂົ້າຢ້ຽມຂໍານັບຄະນະຜູ້ວ່າການຂອງຜູ້ແທນຈາກ ກະຊວງການເງິນ ສະຫະລັດອາເມລິກາ (ຊັ້ນ 3 ທຫລ);

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ເຂົ້າຮ່ວມກອງປະຊຸມສະໄຫມສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ຫ້ອງວ່າການສູນກາງພັກ).

- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ:** ❶ ເຂົ້າຮ່ວມກອງປະຊຸມລັດຖະບານສະໄໝສາມັນປະຈໍາເດືອນຕຸລາ ທີ່ (ຫສນຍ); ❷ ຈັດຕັ້ງພິທີເປີດຕົວລົດຕູ້ສໍາລັບວຽກປະຊາສຶກສາດ້ານການເງິນ; ❸ ກອງປະຊຸມເຜີຍແຜ່ວຽກງານການຈັດຕັ້ງປະຕິບັດການປະເມີນຄວາມສ່ຽງລະດັບຊາດກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃຫ້ກັບບັນດາສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍລິສັດເຊົ່າສິນເຊື່ອ, ໂຮງຊວດຈໍາ, ບໍລິສັດໂອນເງິນສະຫະກອນສິນເຊື່ອ, ສະຖາບັນທີ່ຮັບຝາກ ແລະ ບໍ່ຮັບຝາກ ແລະ ຮ້ານແລກປ່ຽນເງິນຕາ; ❹ ກອງປະຊຸມຄະນະເຮັດວຽກສະເພາະກິດກັບອີງການກວດກາລັດຖະບານ; ❺ ເຂົ້າຮ່ວມຮັບຟັງປາຖະກະຖາວັນສາກົນ ແລະ ວັນສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ 17-24 ຕຸລາ 2017 ທີ່ ຫ້ອງວ່າການສູນກາງພັກ; ❻ ກອງປະຊຸມຄະນະຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ).

- ກະກຽມຕ້ອນຮັບການເຂົ້າຢ້ຽມຄະນະນໍາ ທຫລ ຈາກພາກສ່ວນຕ່າງໆເຊັ່ນ: ທ່ານ Mohd Aini Atan, ເອກອັກຄະລັດຖະທູດມາເລເຊຍ ປະຈໍາລາວ.

ເຊັນແທນຫົວໜ້າຫ້ອງການ
ຮອງຫົວໜ້າຫ້ອງການ

ຫ້ອງການ

ສຸກັນ ຈັນທະວົງ